ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ເປີດໂຕຜະລິດຕະພັນບັດຊິບ ATM BCEL UnionPay



ທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ທຄຕລ) ໄດ້ຈັດພິທີເປີດໂຕຜະລິດຕະພັນບັດຊິບ ATM BCEL UnionPay ຢ່າງເປັນທາງການໃນວັນສຸກວັນທີ 26 ມິຖຸນາ 2021 ທີ່ໂຮງແຮມ ແລນມາກ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ບຸນເຫຼືອ ສິນໄຊວໍລະວົງ ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ; ມີບັນດາກົມຈາກ 8 ກະຊວງ ແລະ ທຫລ, ຄະນະອຳນວຍການ ທຄຕລ-ຄະນະອຳນວຍການທະນາຄານທຸລະກິດລັດ, ບໍລິສັດໃນເຄືອ ທຄຕລ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ການເປີດພິທີໃນຄັ້ງນີ້ໂດຍແມ່ນທ່ານ ພູຊົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ຫວັງ ລີ້ ສິນ ຮອງປະທານຢູນຽນເພ, ພ້ອມທັງການເຂົ້າຮ່ວມເປັນສັກຂີພະຍານຂອງບັນດາການນຳກະຊວງການເງິນ ແລະ ທຫລ ຊຶ່ງໃນປະຈຸບັນ ທຄຕລ ມີຕາໜ່າງບໍລິການທັງໝົດມີ 20 ສາຂາ, 94 ໜ່ວຍບໍລິການ, 15 ໜ່ວຍແລກປ່ຽນ ແລະ ຖານລູກຄ້າຜູ້ຊົມໃຊ້ Mobile Banking ກວມປະມານ 70% ຂອງທຸລະກຳທັງໝົດໃນ ສປປ ລາວ, ໃນນີ້ການບໍລິການຜະລິດຕະພັນບັດ ATM BCEL UnionPay ເປັນອີກການບໍລິການໜຶ່ງຂອງ ທຄຕລ ທີ່ໄດ້ເລີ່ມໃຫ້ບໍລິການແຕ່ປີ 2011 ເປັນຕົ້ນມາໂດຍມີຈຳນວນບັດຫຼາຍກວ່າ 900.000 ບັດກວມເອົາສັດສ່ວນທາງການຕະຫຼາດ 85% ໃນຂອບເຂດທົ່ວປະເທດ.



ການເປີດໂຕນຳໃຊ້ຜະລິດຕະພັນບັດຊິບ ATM BCEL UnionPay ໃນຄັ້ງນີ້ກໍ່ເປັນໜຶ່ງໃນການພັດທະນາດ້ວຍການນຳໃຊ້ຄວາມກ້າວໜ້າຂອງເທັກໂນໂລຍີເຂົ້າໃນວຽກງານປັບປຸງການບໍລິການໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝບົນພື້ນຖານຄວາມປອດໄພ ແລະ ໄດ້ມາດຕະຖານສາກົນ. ໃນການປ່ຽນບັດເປັນບັດຊິບ ATM BCEL UnionPay ນີ້ ນອກຈາກຂໍ້ມູນຈະຖືກເກັບໄວ້ໃນແຜ່ນຊິບເຊິ່ງຈະມີຄວາມປອດໄພສູງ, ປ້ອງກັນຄວາມສ່ຽງໃນການຖືກລັກຂໍ້ມູນແລ້ວຍັງມີຄຸນລັກສະນະທີ່ໂດດເດັ່ນ ແລະ ພິເສດກວ່າເກົ່າຄື: ສາມາດຮອງຮັບການຊຳລະລາຍການເຄື່ອງຮັບບັດ Contactless ຫຼື ເອີ້ນວ່າຟັງຊັ້ນ Tap & Go ເຊິ່ງເປັນເທັກໂນໂລຢີທີ່ເພີ່ມເຂົ້າມາຊ່ວຍໃຫ້ມີຄວາມສະດວກສະບາຍໃນການຊຳລະພຽງແຕ່ແຕະທີ່ເຄື່ອງຮັບບັດກໍ່ສາມາດຊຳລະຄ່າສິນຄ້າແລະບໍລິການໄດ້ແລ້ວ;

ນອກຈາກນັ້ນ, ຍັງອອກບັດເລີ່ມຄື: ບັດ MyWay (ບັດຊິບ ATM BCEL MyWay UnionPay) ເຊິ່ງລູກຄ້າສາມາດເລືອກຫຼືຕົບແຕ່ງຮູບພາບທີ່ປະທັບໃຈພິມໃສ່ບັດໄດ້ຕາມໃຈມັກອີກດ້ວຍ; ພິເສດໄປກວ່ານັ້ນແມ່ນໄດ້ພັດທະນານະວັດຕະກຳໃໝ່ເຊິ່ງເປັນຄັ້ງທຳອິດໃນ ສປປ ລາວ ທີ່ລູກຄ້າສາມາດປ່ຽນບັດໃໝ່ໄດ້ດ້ວຍໂຕເອງໂດຍຜ່ານແອັບ BCEL One ທີ່ສາມາດເລືອກສະຖານທີ່ຮັບບັດໃໝ່ໄດ້; ພ້ອມນັ້ນ, ກໍ່ຍັງສາມາດນຳໃຊ້ຟັງຊັ້ນຕ່າງໆໃນແອັບ BCEL One ໄດ້ໃນລະຫວ່າງທີ່ລໍຖ້າຮັບບັດໃໝ່ອີກດ້ວຍ ພ້ອມນີ້ລູກຄ້າທີ່ນຳໃຊ້ບັດ ATM BCEL UnionPay ແບບເກົ່າສາມາດມາປ່ຽນເປັນບັດຮູບແບບໃໝ່ ຕາມປະເພດບັດຂອງຕົນໄດ້ ໂດຍບໍ່ມີຄ່າທຳນຽມໃນການການປ່ຽນບັດ (ຟຣີ) ເຊິ່ງສາມາດປ່ຽນໄດ້ຜ່ານ 2 ຊ່ອງທາງຄື: ຜ່ານແອັບ BCEL One ແລະ ຜ່ານ Counter ບໍລິການທຸກສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວປະເທດ;

ສຳລັບລູກຄ້າທີ່ນຳໃຊ້ແອັບ BCEL One ພາຍຫຼັງສຳເລັດການປ່ຽນບັດຊິບຜ່ານແອັບ BCEL One ແລ້ວ, ລູກຄ້າຈະໄດ້ຮັບຂໍ້ມູນບັດໃໝ່ທັນທີໃນຮູບແບບ Virtual Card (ບັດສະເໝືອນຈິງ) ແລະ ສາມາດນຳໃຊຟັງຊັ້ນຕ່າງໆໄດ້ເໝືອນເດີມຫຼັງຈາກນັ້ນລູກຄ້າຈະໄດ້ຮັບຂໍ້ຄວາມແຈ້ງເຕືອນຈາກທະນາຄານຜ່ານແອັບ BCEL One ເພື່ອໃຫ້ລູກຄ້າເຂົ້າມາພົວພັນຮັບບັດໃໝ່ ທີ່ຈຸດບໍລິການຂອງທະນາຄານຕາມລູກຄ້າໄດ້ເລືອກໄວ້ ແລະ ສຳລັບລູກຄ້າທີ່ບໍ່ນຳໃຊ້ແອັບ BCEL One ແມ່ນສາມາດມາປ່ຽນ ແລະ ຮັບບັດໄດ້ທີ່ເຄົາເຕີ້ບໍລິການໂດຍລະຫັດຮັບບັດຈະຖືກສົ່ງເຂົ້າເບີມືຖືຂອງລູກຄ້າ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ